gef UNDP PEMSEA asean

ການຫຼຸດຜ່ອນມົນລະພິດ ແລະ
ການປົກປັກຮັກສາສິ່ງແວດລ້ອມ ໃນ
ພາກພື້ນອາຊີຕາເວັນອອກໂດຍຜ່ານ
ການຈັດຕັ້ງປະຕິບັດ

# ການຄຸ້ມຄອງອ່າງຮັບນ້ຳ ແບບເຊື່ອມສານ (IRBM)

## ໃນປະເທດສະມາຊິກອາຊຽນ



# ໂຄງການຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານແມ່ນຫຍັງ?

ແມ່ນ້ຳມີບົດບາດສຳຄັນໃນການຫຼໍ່ລ້ຽງຊີວິດ, ຊຸກຍູ້ສິ່ງເສີມຊຸມຊົນ ແລະ ຂັບເຄື່ອນທາງດ້ານເສດຖະກິດ. ໂຄງການຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານມີຈຸດປະສົງເພື່ອສ້າງກົນໄກການຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານມີປະສິດທິຜົນໃນເຂດອ່າງຮັບນ້ຳບູລິມະສິດຂອງ 6 ປະເທດສະມາຊິກອາຊຽນ ເພື່ອຫຼຸດຜ່ອນມົນລະພິດ ແລະ ຄວາມຍືນຍົງ ຂອງຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເຊັ່ນດຽວກັນກັບການປັບຕົວເຂົ້າກັບການປ່ຽນແປງ ຂອງດິນຟ້າອາກາດ.

## ທີ່ຕັ້ງຂອງໂຄງການການຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານ




*This graphic is not drawn to scale and is provided for illustration purposes only.*

## ເປົ້າໝາຍ

ເພື່ອສ້າງລະບົບການຄຸ້ມຄອງອ່າງຮັບນ້ຳໃຫ້ມີປະສິດທິພາບ ຊຶ່ງຈະຊ່ວຍເຮັດໃຫ້ແມ່ນ້ຳມີຄຸນນະພາບດີ, ຫຼຸດຜ່ອນມົນລະພິດ ແລະ ຮັບປະກັນປະລິມານການໄຫຼຂອງນ້ຳໃຫ້ພຽງພໍແກ່ມະນຸດ, ທຳມະຊາດ ແລະ ການດຳລົງຊີວິດຂອງປະຊາຊົນ

## ພາລະກິດ

ພວກເຮົາກຳລັງເຮັດວຽກກ່ຽວກັບ ການຄຸ້ມຄອງ ອ່າງຮັບນ້ຳດ້ວຍ:



**ການຫຼຸດຜ່ອນມົນລະພິດ ຈາກ ການເຮັດ ກະສິກຳ, ໂຮງ ຈັກໂຮງງານ ແລະ ກິດ ຈະ ກຳທີ່ດິນອື່ນໆ**



**ປົກປັກຮັກສາ ແລະ ປ້ອງກັນ ປະລິມານການໄຫຼຂອງນ້ຳ ໃຫ້ແກ່ຊຸມຊົນ ແລະ ລະບົບ ນິເວດ**



**ຊ່ວຍໃຫ້ຊຸມຊົນປັບຕົວ ເຂົ້າ ກັບການປ່ຽນແປງ ດິນ ຟ້າອາກາດໂດຍພື້ນ ຖານ ການອາງແຜນ ແລະ ການປະຕິບັດທີ່ດີຂຶ້ນ**

# ໂຄງການການຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານເຮັດວຽກແນວໃດ?

ພວກເຮົາເຮັດວຽກໃນສີ່ໜ້າວຽກຫຼັກເພື່ອໃຫ້ບັນລຸເປົ້າໝາຍ:

## ຄວາມເຂົ້າໃຈກ່ຽວກັບແມ່ນ້ຳ

ພວກເຮົາກຳລັງດຳເນີນການປະເມີນຢ່າງລະອຽດ ເພື່ອເຂົ້າໃຈສະພາບປະຈຸບັນຂອງແມ່ນ້ຳ ແລະ ສິ່ງທ້າທາຍ.

### ຜົນໄດ້ຮັບມີຫຍັງແດ່?

ບົດລາຍງານສະພາບອ່າງຮັບນ້ຳທີ່ເປັນແນວທາງໃນການປະຕິບັດແລະ ການຕັດສິນໃຈເພື່ອການວາງແຜນຄຸ້ມຄອງອ່າງຮັບນ້ຳ.

## ການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງແມ່ນ້ຳ

ພວກເຮົາໄດ້ນຳເອົານະໂຍບາຍ ແລະ ໂຄງການຕົວແບບ ເພື່ອປັບປຸງການປົກຄອງ ແລະ ການຄຸ້ມຄອງນ້ຳ.

### ລວມມີຫຍັງແດ່?

- **ໂຄງການຕົວແບບ:** ການທົດລອງແນວທາງການແກ້ໄຂທາງການຈັດຕັ້ງປະຕິບັດເພື່ອການຄຸ້ມຄອງນ້ຳ ທີ່ດີຂຶ້ນ ລວມທັງການສຶກສາຄວາມເປັນໄປໄດ້, ການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ແລະ ການວາງແຜນທາງດ້ານການເງິນ.
- **ນະໂຍບາຍ ແລະ ເຄື່ອງມືທີ່ດີຂຶ້ນ:** ການສ້າງຍຸດທະສາດ ແລະ ແຜນດຳເນີນງານປະຕິບັດງານໂດຍອີງໃສ່ ການຈັດຕັ້ງປະຕິບັດທີ່ດີ, ການປັບປຸງກົດໝາຍ ແລະ ການຮ່ວມມືທີ່ຮັດກຸມກ່ວາເກົ່າ.

## ການສ້າງຄວາມຮູ້ ແລະ ທັກສະ

ພວກເຮົາກະກຽມຄວາມຮູ້ ແລະ ເຄື່ອງມືທີ່ຈຳເປັນໃຫ້ກັບຊຸມຊົນ, ຜູ້ມີອຳນາດໃນການຕັດສິນໃຈ ແລະ ຜູ້ຊ່ຽວຊານໃນການປົກປັກຮັກສາແມ່ນ້ຳ.

### ຂໍ້ສະເໜີ

- ການຝຶກອົບຮົມກ່ຽວກັບການຄຸ້ມຄອງຊັບພະຍາກອນນ້ຳຢ່າງມີປະສິດທິພາບ
- ເຄື່ອງມື ແລະ ຂະບວນການໃນການຕິດຕາມຄຸນນະພາບນ້ຳ
- ໂຄງຮ່າງໃນການແລກປ່ຽນຄວາມຮູ້ ແລະ ແນວຄວາມຄິດ
- ໂອກາດໃນການເຊື່ອມຕໍ່ຜ່ານເວທີປະຊຸມປຶກສາຫາລື, ການແລກປ່ຽນ ແລະ ສ້າງເຄືອຂ່າຍ.

## ການວັດແທກຜົນສຳເລັດ

ພວກເຮົາໄດ້ຕິດຕາມຄວາມຄືບໜ້າເປັນປະຈຳເພື່ອຮັບປະກັນວ່າຜົນການຈັດຕັ້ງປະຕິບັດມີຄວາມໝາຍ ແລະ ຄວາມຍືນຍົງ.

### ພວກເຮົາເຮັດແນວໃດ?

- ທົບທວນປະຈຳປີເພື່ອປະເມີນຄວາມຄືບໜ້າ
- ການປະເມີນ ໃນຊ່ວງກາງ ແລະ ໄລຍະສິ້ນສຸດໂຄງການ
- ຜົນໄດ້ຮັບຂອງການຈັດຕັ້ງປະຕິບັດໂຄງການທີ່ດີ, ບົດຮຽນທີ່ຖອດຖອນໄດ້ ແລະ ການ ຂະຫຍາຍພື້ນທີ່ຂອງໂຄງການ.

# ດ້ວຍເຫດໃດເລື່ອງນີ້ຈຶ່ງສຳຄັນ?

ແມ່ນ້ຳທີ່ອຸດົມສົມບູນເປັນພື້ນຖານຂອງຊຸມຊົນທີ່ຮຸ່ງເຮືອງສີວິໄລ, ມີລະບົບນິເວດທີ່ທົນທານ ແລະ ສ້າງເສດຖະກິດທີ່ຍືນຍົງ. ຜ່ານໂຄງການຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານຂອງບັນດາປະເທດສະມາຊິກອາຊຽນໄປພ້ອມກັບການປົກປັກຮັກສາແຫຼ່ງຊັບພະຍາກອນທີ່ສຳຄັນ, ຮັບປະກັນໃຫ້ຄົນລຸ້ນຫຼັງມີອະນາຄົດທີ່ດີຂຶ້ນກວ່າເກົ່າ.

# ຂໍ້ມູນໂຄງການ

ທຶນສະໜັບສະໜູນຈາກ: ກອງທຶນ
ປົກປັກຮັກສາສິ່ງແວດລ້ອມໂລກ (GEF)

**8,479,123 ໂດລາສະຫະລັດ**

ໂຄງການເລີ່ມຕົ້ນ: **ມັງກອນ 2023**
ໂຄງການສິ້ນສຸດ: **ທັນວາ 2027**

ອົງການຈັດຕັ້ງປະຕິບັດໂຄງການ: **ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP)**

ອົງການບໍລິຫານໂຄງການ: **ອົງການຄູ່ຮ່ວມງານດ້ານການຄຸ້ມຄອງສິ່ງແວດລ້ອມໃນຂົງເຂດທະເລອາຊີຕາເວັນອອກ (PEMSEA)**

## ຄູ່ຮ່ວມງານການຈັດຕັ້ງປະຕິບັດແຫ່ງຊາດ

ກະຊວງສິ່ງແວດລ້ອມ, ກຳປູເຈຍ

ກະຊວງສິ່ງແວດລ້ອມ, ອິນໂດເນເຊຍ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສປປ ລາວ

ກະຊວງປະຕິຮູບພະລັງງານ ແລະ ນໍ້າ, ມາເລເຊຍ

ກະຊວງສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ, ຟິລິບປິນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫວຽດນາມ



**ຮຽນຮູ້ເພີ່ມເຕີມ
ກ່ຽວກັບໂຄງການ
ຄຸ້ມຄອງອ່າງຮັບນໍ້າ
ແບບເຊື່ອມສານ!**

(+62) 02 892 92992

info@pemsea.org

PEMSEA Building, DENR Compound,
Visayas Avenue, Quezon City 1165,
Philippines

PEMSEA | pemsea | pemsea.rf

www.pemsea.org